This translation is out of date. You are encouraged to distribute the up-to-date English-language version at the same time as the outdated translation.
To access descriptions of changes of outdated VISs, go to www.immunize.org/vis. IMM 502 ML

# ຢາວັກຊີນໂລກຕັບ A

## ສິ່ງທີ່ທ່ານຕ້ອງຮູ້ຈັກ

## 1 ໂລກຕັບ A ແມ່ນຫຍັງ?

ໂລກຕັບ A ແມ່ນພະຍາດຕັບຢ່າງຮ້າຍແຮງທີ່ເກີດຈາກເຊື້ອໄວຣັດໂລກຕັບ A (HAV). ເຊື້ອ HAV ຈະເຫັນໄດ້ຢູ່ໃນອາຈົມຂອງຄົນທີ່ເປັນໂລກຕັບ A. ທັມມະດາໂລກໄດ້ແຜ່ອອກໄປໂດຍການຕິດຕໍ່ກັນຢ່າງໃກ້ສິດແລະໃນບ່າງກໍຣະນີໂດຍທາງການກິນອາຫານຫລືດື່ມນ້ຳທີ່ມີເຊື້ອ HAV.

ໂລກຕັບ A ສາມາດເກີດ:

- ອາການເຈັບປ່ວຍແບບ ໄຂ້ຫວັດໃຫຍ່ ທີ່ບໍ່ຮ້າຍແຮງ
- ພະຍາດບີ່ຊ່ານ (ໜັງແລະຕາສີເຫລືອງ)
- ອາການເຈັບທ້ອງຢ່າງຮ້າຍແຮງແລະການຖອກທ້ອງ



ບຸກຄົນທີ່ເປັນໂລກຕັບ A ຕ້ອງນອນໂຮງໝໍຢູ່ເລື້ອຍ. ມີບາງກໍຣະນີທີ່ນັ້ນທີ່ໂລກຕັບ A ອາດເຮັດໃຫ້ຕາຍໄດ້.

ບຸກຄົນໃດທີ່ເປັນໂລກຕັບ A ສາມາດແຜ່ພະຍາດໄປໃຫ້ຄົນອື່ນທີ່ຢູ່ໃນເຮືອນດຽວໄດ້ງ່າຍ.

**ຢາວັກຊີນໂລກຕັບ A ສາມາດປ້ອງກັນໂລກຕັບ A ໄດ້.**

## 2 ໃຜຄວນຮັບການສັກຢາໂລກຕັບ A ແລະເມື່ອໃດ?

- ຜູ້ຄົນທີ່ມີອາຍຸ 2 ປີຂື້ນໄປທີ່ເດີນທາງຫຼືເຮັດວຽກຢູ່ໃນປະເທດທີ່ມີໂລກຕັບ A ໃນລະດັບສູງ ເຊັ່ນ ປະເທດທີ່ຢູ່ໃນທາວີບອະເມຣິກາກາງຫຼືໃຕ້, ເຂດຄາລາບຽນ, ແມກຊີໂກ, ອາຊີ (ນົກເວັ້ນ ນີ່ປຸ່ນ), ອາຟຣິກາ, ແລະຢູໂຣບໃຕ້ຫຼືທິດຕາເວັນອອກ. *ຄວນຈະເລີ້ມສັກວັກຊີນຢ່າງນ້ອຍນຶ່ງເດືອນກ່ອນໄດ້ອອກເດີນທາງ.*
- ຜູ້ຄົນທີ່ຢູ່ໃນເຂດທີ່ເກີດມີໂລກຕັບ A ຢ່າງດົນນານ.
- ພວກຄົນທີ່ຢູ່ໃນຊຸມຊົນທີ່ມີໂລກຕັບ A ໃນລະດັບສູງ: ຕົວຢ່າງ, ຊົນເຜົ່າອາເມຣິກັນ, ຊົນເຜົ່າອາລາດສະກາ, ແລະຊຸມຊົນເກາະພາຊີຟິກແລະຊຸມຊົນບາງສາດສະໜາ.
- ຜູ້ຊາຍທີ່ຮ່ວມເພດກັບຜູ້ຊາຍ.
- ພວກຄົນທີ່ໃຊ້ຢາເສບຕິດ.
- ພວກຄົນທີ່ເປັນໂລກຕັບຊ້ຳເຮື້ອ.
- ພວກຄົນທີ່ກຳລັງໃຊ້ຢາເຂັ້ມຂຸ້ນເພື່ອເຮັດໃຫ້ເລືອດກ້າມ.

ເພື່ອປ້ອງກັນໃນລະຍະຍາວ ຈະຕ້ອງສັກຢາວັກຊີນສອງຊຸດທີ່ຫ່າງກັນ 6 ເດືອນ.

ຢາວັກຊີນໂລກຕັບ A ອາດສັກໄດ້ໃນເວລາດຽວກັນກັບການສັກຢາວັກຊີນຢ່າງອື່ນ.



## 3 ບາງຄົນບໍ່ຄວນຮັບການສັກຢາວັກຊີນໂລກຕັບ A ຫຼືຄວນລໍຖ້າ

ຄົນໃດທີ່ເຄີຍມີປະຕິກິລິຍາອັນ<u>ຮ້າຍແຮງ</u>ໃນເວລາທີ່ຮັບການສັກຢາວັກຊີນໂລກຕັບ A ເທື່ອກ່ອນບໍ່ຄວນຮັບການສັກຢາອີກ.

ພວກຄົນທີ່ມີອາການເຈັບປ່ວຍຢ່າງເບົາໃນເວລາທີ່ນັດໃຫ້ຮັບການສັກຢາຄວນຮັບການສັກຢາວັກຊີນໂລກຕັບ A. ພວກຄົນທີ່ມີອາການເຈັບປ່ວຍໜັກປານກາງຫຼືຮ້າຍແຮງນັ້ນ, ຕາມທັມມະດາຄວນລໍຖ້າຈົນໄດ້ຫາຍກ່ອນ. ທ່ານໝໍຫຼືນາງພະຍາບານຂອງທ່ານຈະສາມາດແນະນຳທ່ານໄດ້.

ຄວາມປອດພັຍຂອງຢາວັກຊີນໂລກຕັບ A ຕໍ່ພວກຜູ້ຍິງທີ່ຖືພາຍັງບໍ່ໄດ້ຮູ້ຈັກເທື່ອ. ແຕ່ວ່າການສ່ຽງຕໍ່ຜູ້ຍິງທີ່ຖືພາຫຼືລູກທີ່ຢູ່ໃນທ້ອງນັ້ນຄິດວ່າມີໜ້ອຍທີ່ສຸດ.

ໃຫ້ຂໍລາຍລະອຽດຈາກທ່ານໝໍຫຼືນາງພະຍາບານຂອງທ່ານ.

## 4 ມີການສ່ຽງຫຍັງຕໍ່ຢາວັກຊີນໂລກຕັບ A?

ຢາວັກຊີນ, ເໝືອນກັບຢາຊະນິດໃດໆ,
ສາມາດເກີດບັນຫາຢ່າງຮ້າຍແຮງໄດ້, ເຊັ່ນເກີດປະຕິກິລິຍາຮ້າຍແຮງ.
ການສ່ຽງທີ່ຢາວັກຊີນໂລກຕັບ A
ຈະເກີດອາການຮ້າຍແຮງຫຼືຄວາມຕາຍແມ່ນນ້ອຍທີ່ສຸດ.

ການຮັບການສັກຢາວັກຊີນໂລກຕັບ A
ປອດພັຍຫລາຍກວ່າການເກີດພະຍາດ.

### ບັນຫາເລັກນ້ອຍ

- ການເຈັບປວດໃນບ່ອນທີ່ສັກຢາ *(ຜູ້ໃຫ່ຍປະມານ 1 ໃນຈຳນວນ 2 ຄົນ, ແລະເດັກນ້ອຍສູງເຖິງ 1 ຄົນໃນຈຳນວນ 5 ຄົນ)*
- ອາການເຈັບຫົວ *(ຜູ້ໃຫ່ຍປະມານ 1 ຄົນໃນຈຳນວນ 6 ຄົນ, ແລະເດັກນ້ອຍ 1 ຄົນໃນຈຳນວນ 20 ຄົນ)*
- ກິນເຂົ້າບໍ່ແຊບ *(ເດັກນ້ອຍປະມານ 1 ຄົນໃນຈຳນວນ 12 ຄົນ)*
- ເໝື່ອຍ *(ຜູ້ໃຫ່ຍປະມານ 1 ຄົນໃນຈຳນວນ 14 ຄົນ)*

ຖ້າມີບັນຫາເຫລົ່ານີ້ເກີດຂຶ້ນຕາມປົກກະຕິຈະມີຂຶ້ນພາຍໃນ 3-5 ມື້ຫລັງຈາກໄດ້ຮັບການສັກຢາແລ້ວແລະຈະເປັນນານເຖິງ 1-2 ມື້.

### ບັນຫາຮ້າຍແຮງ

- ປະຕິກິລິຍາຮ້າຍແຮງ, ພາຍໃນສອງສາມນາທີສູງເຖິງສອງສາມຊົ່ວໂມງຫລັງຈາກໄດ້ຮັບການສັກຢາ *(ນ້ອຍ ເທື່ອທີ່ສຸດ)*.

## 5 ຖ້າມີປະຕິກິລິຍາປານກາງຫຼືຮ້າຍແຮງຈະເຮັດແນວໃດ?

### ຂ້າພະເຈົ້າຄວນສັງເກດເບິ່ງຫຍັງ?

ອາການໃດທີ່ຜິດປົກກະຕິ,
ເຊັ່ນເປັນໄຂ້ສູງຫຼືມີການປ່ຽນແປງໃນການປະພຶດ.
ເຄື່ອງໝາຍຂອງການປະຕິກິລິຍາຮ້າຍແຮງສາມາດປະກອບໂດຍອາການ
ຫັນໃຈຝືດ, ສຽງແຫບຫຼືສຽງແຫລມ, ລົມພິດ, ໜ້າມ້ານ,
ອ່ອນແຮງ, ຫົວໃຈເລັ່ນໄວໆ, ຫຼືວິນຫົວ.

### ຂ້າພະເຈົ້າຄວນເຮັດຫຍັງ?

- ໂທຫາທ່ານໝໍ, ຫຼືສົ່ງຄົນນັ້ນໄປຫາທ່ານໝໍທັນທີ.
- ໃຫ້ບອກສິ່ງທີ່ໄດ້ເກີດຂຶ້ນໃຫ້ທ່ານໝໍຊາບ, ເຊັ່ນວັນທີແລະໂມງທີ່ໄດ້ເກີດຂຶ້ນ, ແລະໄດ້ຮັບການສັກຢາວັກຊີນເມື່ອໃດ.
- ໃຫ້ຂໍທ່ານໝໍ, ນາງພະຍາບານ, ຫຼືກົມສະທາຣະນະສຸກ ໃຫ້ປື້ນແບບຟອມຣະບົບລາຍງານເຫດຮ້າຍຂອງຢາວັກຊີນ(VAERS), ຫຼືໃຫ້ທ່ານເອງໂທຫາ VAERS ຢູ່ທີ່ **1-800-822-7967**.

## 6 ຂ້າພະເຈົ້າຈະຮຽນຮູ້ອີກເພີ່ມຕື່ມໄດ້ຢ່າງໃດ?

- ໃຫ້ຖາມທ່ານໝໍຫຼືນາງພະຍາບານຂອງທ່ານ. ເຂົາເຈົ້າຈະສາມາດເອົາເຈັ້ຍທີ່ຍັດໃສ່ໃນກ່ອງຢາມາໃຫ້ທ່ານຫຼືແນະນຳທ່ານໄປຫາຣາຍລະອຽດຢູ່ໃນທາງອື່ນກໍໄດ້.
- ໃຫ້ໂທຫາກົມສາທາຣະນະສຸກຂອງທ້ອງຖິ່ນຫຼືຂອງຣັດຂອງທ່ານ.
- ໃຫ້ຕິດຕໍ່ກັບສູນກາງຄວບຄຸມແລະປ້ອງກັນພະຍາດ (CDC):
  - ໂທຫາ **1-800-232-2522** (ພາສາອັງກິດ)
  - ໃຫ້ໄປເບິ່ງສະຖານທີ່ອິນເຕີແນດຂອງໂຄງການສັກຢາປ້ອງກັນພະຍາດແຫ່ງຊາດຢູ່ທີ່ **http://www.cdc.gov/nip**, ຫຼືສະຖານທີ່ອິນເຕີແນດຂອງ ພະຍາດຕັບຂອງ CDC ຢູ່ທີ່ **http://www.cdc.gov/ncidod/diseases/hepatitis/hepatitis.htm**

### IMMUNE GLOBULIN (IG)

**Immune globulin** ສາມາດເພີ້ມຄູ້ມຄຸມກັນໂລກຕັບ A ຊົ່ວຄາວໄດ້.

**ໃຜຄວນຮັບການສັກຢາ IG?**
- ຄົນທີ່ໄດ້ຖືກເຊື້ອ HAV ແລະສາມາດຮັບການສັກຢາ IG ໄດ້ພາຍໃນ 2 ອາທິດຫລັງຈາກວັນຖືກເຊື້ອ.
- ຄົນທີ່ທ່ຽວໄປໃນເຂດທີ່ເປັນໂລກຕັບ A ໃນລະດັບສູງ, ຖ້າເຂົາເຈົ້າບໍ່ໄດ້ຮັບສັກຢາວັກຊີນໂລກຕັບ A.

**ຄວນສັກຢາ IG ເມື່ອໃດ?**
ຈະສັກຢາກ່ອນຖືກເຊື້ອ HAV ຫຼືພາຍໃນ 2 ອາທິດຫລັງຈາກຖືກເຊື້ອ.

**ຜົນປະໂຫຍດ**
IG ໄດ້ປ້ອງກັນ HAV ສຳລັບ 3-5 ເດືອນ, ອີງຕາມຈຳນວນທີ່ສັກ.

**ການສ່ຽງ**
ນ້ອຍທີ່ສຸດ: ການບວມຂຶ້ນ, ມຸ່ນມ່ານ, ຫຼືປະຕິກິລິຍາ.

U.S. DEPARTMENT OF HEALTH & HUMAN SERVICES
Centers for Disease Control and Prevention
National Immunization Program

Vaccine Information Statement
Hepatitis A IMM 502 ML Laotian (8/25/98)
Translated by Transcend Translations, Davis, CA
http://www.transcend.net